ພັກແລະກໍາລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & freedom fighters
Central Representative P.O. Box 189486 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

ພັກແລະກໍາລັງທັບເສຣີປະຊາທິປະໄຕລາວ

* ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.

ເລກທີ 393/ປພຖຂ/012218

# ຖແລງການ
# ຢຸດຕິ ຕັ້ງຂໍ້ຫາ ປະຊາຊົນ.

ພວກເຮົາປະຊາຊົນພັກເສຣີປະຊາທິປະໄຕລາວ,ໄດ້ອອກຖແລງການສບັບນີ້ເພື່ອສເນີໃຫ້ພັກຣັດໄດ້ຢຸດຕິການປະຕິບັດງານຂອງປກສແລະໜ່ວຍງານຕ່າງໆແບບຕັ້ງຂໍ້ຫາໃສ່ປະຊາຊົນ,ປັດສະຈາກຫລັກຖານຂໍ້ມູນຄວາມຈິງ.

ການຕັ້ງຂໍ້ຫາໃສ່ປະຊາຊົນແບບບໍ່ມີຫລັກຖານເປັນການຣະເມີດຕໍ່ກົດໝາຍຢ່າງຮ້າຍແຮງ,ເປັນການຕ້ານການປະຕິວັດຊາດປະຊາທິປະໄຕ,ຂອງພັກປະຊາຊົນປະຕິວັດລາວເອງ,ແລະເປັນການສ້າງຄວາມຢ້ານກົວ,ບໍ່ມີຄວາມປອດໄພຕໍ່ຊີວິດຊັບສິນຂອງປະຊາຊົນ,ກໍ່ຄືການຕ້ານຊາດຕ້ານປະຊາຊົນນັ້ນເອງ.

ກົດໝາຍວ່າດ້ວຍກໍາລັງປ້ອງກັນຄວາມສງົບຂອງປະຊາຊົນ,ໝວດ 2,ມາຕຣາ 11 ຂອບເຂດສິດ,ໃນຂໍ້1.ໄດ້ຣະບຸໄວ້ວ່າ:ກວດກາການເຄົາຣົບແລະປະຕິບັດກົດໝາຍໃນສັງຄົມເພື່ອປົກປັກຮັກສາຄວາມສງົບແລະຄວາມ ເປັນຣະບຽບຮຽບຮອຍຂອງສັງຄົມ,ຊີວິດ,ຊັບສິນ,ຜົນປະໂຍດຂອງຣັດແລະລວມໝູ່,ສິດແລະຜົນປະໂຍດອັນຊອບທັມຂອງພົລະເມືອງ.

ແຕ່ການປະຕິບັດງານຂອງປກສ,ຂອງຕໍາຣວດສັນຕິບານ,ໜ່ວຍສອດແນມ,ໜ່ວຍຂ່າວກອງປກສ,ເຮັດວຽກແບບຕັ້ງຂໍ້ຫາ,ຕັ້ງຂໍ້ສົງໃສເພື່ອເອົາຜິດ,ປາບປາມຈັບກຸມປະຊາຊົນຈິ່ງຜິດຕໍ່ຂອບເຂດສິດ,ທີ່ຣະບຸໄວ້ໃນກົດໝາຍ,ເພາະຄວາມສງົບສັນຕິທີ່ແທ້ຈິງນັ້ນ,ບໍແມ່ນໄດ້ມາຈາກການໄຊ້ອໍານາດປິດປາກປະຊາຊົນ!,... ແຕ່ມັນ ເກີດມາຈາກການເຄົາຣົບຕໍ່ສິດທິເສຣີພາບຂອງປະຊາຊົນຕ່າງຫາກ.!

ນອກຈາກບໍສອດຄ່ອງກັບຈິດໃຈຂອງກົດໝາຍແລ້ວ,ຍັງຝືນຕໍ່ອຸດົມການຊາດພັທນາສີວິໄລຂອງປະທານປະເທດ,ທ່ານບຸນຍັງວໍລະຈິດທີ່ໄດ້ເນັ້ນໜັກໃສ່ເອົາມາດຕະການເຂັ້ມງວດຕໍ່ພຶດຕິກັມອາຍາສິດແລະການສໍ້ຣາດບັງຫລວງຂອງພນັກງານພັກຣັດຢຸ່ກອງປະຊຸມຄນະບໍຣິຫານສູນກາງພັກຄັ້ງທີ3 ສໄມທີ10.,ທັງຝືນຕໍ່ຄໍາໝັ້ນ ສັນຍາ,ຄໍາປະຕິຍານຂອງທ່ານທອງລຸນສີສູລິດນາຍົກຣັຖມົນຕຣີທີ່ວ່າ:ຈະເຊີດຊູມະນະຈິດປະຕິວັດອັນສູງ ສົ່ງເພື່ອປະຕິບັດໜ້າທີ່ພາຍໄຕ້ຣັຖທັມນຸນແລະກົດໝາຍ.

ການທີ່ປະທ່ານປະເທດແລະນາຍົກຣັຖມົນຕຣີໄດ້ສແດງອອກເຖິງຄວາມໝາຍໝັ້ນຕັ້ງໃຈຢາກໃຫ້ສປປລາວເປັນຣັຖທີ່ປົກຄອງກັນດ້ວຍກົດໝາຍ,ຢາກໃຫ້ຄນະພັກຣັຖທຸກຄົນໄດ້ຢຸດຕິໄຊ້ພຶດຕິກັມອາດຍາສິດ,ຂົ່ມຂູ່ປາບປາມປະຊາຊົນນັ້ນ,ກໍດີທີ່ສຸດແລ້ວ,ສາກົນ,ກຸມພາຄີຮ່ວມ 15 ປະເທດ,ສຫພຢູຣົບແລະປະເທດເພື່ອນມິດກໍ່ສນັບສນູນເຫັນດີນຳທີ່ຣັຖບານຂອງທ່ານທອງລູນໃຫ້ຄວາມຮ່ວມມືຕັ້ງໜ້າປັບປຸງແກ້ໄຂກົດໝາຍຕື່ມເພື່ອຮັບປະກັນໃຫ້ການປະສານງານຮ່ວມລະຫວ່າງລາວສອງຝ່າຍໄດ້ເປັນໄປຢ່າງສັນຕິ,ຕາມຈິດໃຈຂອງນະໂຍບາຍ 3 ເປີດ:ເປີດປະຕູ,ເປີດສິ່ງກີດຂວາງແລະເປີດໃຈ ຂອງນາຍົກຣັຖມົນຕຣີ.

ແຕ່ໃນຄວາມເປັນຈິງແລ້ວ,ປະຊາຊົນລາວຍັງມີຄວາມຢ້ານກົວບໍ່ມີຄວາມປອດໄພຕໍ່ຊີວິດແລະຊັບສິນຂອງຕົນ,ບໍ່ກ້າໂທສາຍດ່ວນໄປຮ້ອງທຸກຜ່ານໜ່ວຍງານຂອງຣັຖບານ,ນັກຂ່າວກໍບໍ່ກ້າລົງຂ່າວຣະບຸຊື່ບຸກຄົນສໍ້ຣາດບັງຫລວງ,ລ່ຳລວຍຮັ່ງມີຜິດປົກກະຕິຢູ່ໃນຄນະພັກຣັດຍ້ອນການຕັ້ງຂໍ້ຫາຂອງປກສແລະໜ່ວຍງານຕ່າງໆຂອງພັກຣັດ,ເມື່ອຈັບໄປແລ້ວກໍ່ຖືກບັງຄັບໃຫ້ຍອມຮັບຜິດຫລືເອົາເງິນໄປຊື້ຈ້າງຈິ່ງຈະໄດ້ປ່ອຍຕົວ. ຜູ້ໃດສແດງຄວາມບໍຣິສຸດໃຈ,ບໍ່ຍອມຮັບຜິດຫລືບໍ່ມີເງິນຊື້ຈ້າງກໍ່ຖືກຂັງລືມແລະຕາຍຢູ່ໃນຄຸກຢ່າງໜ້າເວທະນາ ມີຖົມໄປ.

ການກະທຳດັ່ງກ່າວນີ້,ເປັນການຣະເມີດຕໍ່ສິດທິມະນຸສຢ່າງຮ້າຍແຮງ,ເປັນການສົ່ງເສີມຄວາມບໍ່ຍຸຕິທັມໃນສັງຄົມ,ສົ່ງເສີມການສໍ້ຣາດບັງຫລວງໃຫ້ແຜ່ລາມອອກໄປ,ແລະສ້າງຄວາມຢ້ານກົວ,ສ້າງຄວາມບໍ່ເຊື່ອໝັ້ນ-ກຽດຊັງໃນຣັຖບານຂອງທ່ານທີ່ບໍ່ຈິງໃຈຮັບໄຊ້ຊາດຮັບໄຊ້ປະຊາຊົນ.

ນັກທ່ອງທ່ຽວແລະຄົນເຊື້ອຊາດລາວຢູ່ຕ່າງປະເທດ,ກໍ່ຈະລົດນ້ອຍຖອຍລົງຍ້ອນບໍ່ມີຄວາມປອດໄພ,ຈະເຫັນໄດ້ຈາກການຈັບນັກທ່ອງທ່ຽວໄທຍຢູ່ແຂວງຊຽງຂວາງຢ່າງໄຮ້ເຫດຜົນ,ຈັບທ້າວແພງຢູ່ແຂວງຫລວງພະບາງໃນວັນທີ3 ມິຖຸນາ 2017 ກໍຣະນີນັກທ່ອງທ່ຽວເກົາຫລີໄຕ້ຫາຍຕົວໄປ,ຈັບປະຊາຊົນບ້ານຍືບເມືອງທ່າແຕງແຂວງເຊກອງ 14 ຄົນໃນວັນທີ25 ກໍຣະກະດາ 2017 ຍ້ອນເປັນເຈົ້າຂອງທີ່ດິນສືບຕໍ່ກັນແຕ່ປູ່ຍ່າຕາຍາຍຂອງຕົນ ເອງມາໄດ້ຫລາຍຊົ່ວຄົນ.

ພັກຣັດຕ້ອງຢຸດຕິການຕັ້ງຂໍ້ຫາ,ຕັ້ງຂໍ້ສົງໃສເພາະມັນເຮັດໃຫ້ເກີດຄວາມບໍ່ຍຸຕິທັມໃນສັງຄົມ,ເຮັດໃຫ້ແຜນພັທນາຊາດບໍ່ໄດ້ຣະດັບຄາດໝາຍ,ແລະມັນຂັດກັນ,ກັບຈິດໃຈຂອງກົດໝາຍວ່າດ້ວຍສານປະຊາຊົນຫລາຍມາ ຕຣາເປັນຕົ້ນ:ມາຕຣາ 1.ຣະບຸໄວ້ວ່າ:ສານປະຊາຊົນແມ່ນອົງການພິພາກສາຂອງຣັດ,ປົກປັກຮັກສາສິດຜົນ ປະໂຍດອັນຊອບທັມຂອງພົລະເມືອງ,ຮັບປະກັນຄວາມຍຸຕິທັມ,ກຳຈັດແລະສກັດກັ້ນການຣະເມີດຕໍ່ກົດໝາຍ

ມາຕຣາ 2.ຣະບຸໄວ້ວ່າ:ສານມີສິດແລະໜ້າທີ່ພິຈາຣະນາຄະດີແລະລົງໂທດຜູ້ຣະເມີດກົດໝາຍ,ແລະມາຕຣາ 4 ໄດ້ຣະບຸວ່າ:ພົລະເມືອງລາວທຸກຄົນມີຄວາມສເມີພາບຕໍ່ໜ້າກົດໝາຍແລະສານ, ບໍ່ມີການຈຳແນກ. ສນັ້ນ,ການຢຸດເຊົາຕັ້ງຂໍ້ຫາປະຊາຊົນຢ່າງໄຮ້ເຫດຜົນຈິ່ງເປັນການປະຕິບັດງານສອດຄ່ອງກັບຈິດໃຈຂອງກົດໝາຍທີ່ໄດ້ຮັບການປັບປຸງແກ້ໄຂ,ຜ່ານສະພາ. ອັນນີ້,ຄືການຄືນສິດທິເສຣີພາບໃຫ້ປະຊາຊົນ. - ທຸກຄົນຮູ້ສຶກມີຄວາມປອດໄພໃນສັງຄົມ,ຄົນເຊືອຊາດລາວໃນຕ່າງປະເທດມາຢ້ຽມຢາມບ້ານຫລືມາຊ່ວຍພັທນາປະເທດແລະນັກທ່ອງທ່ຽວກໍ່ຈະມີເພີ້ມຫລາຍຂຶ້ນຍ້ອນມີຄວາມໝັ້ນໃຈໃນຄວາມຮັກຊາດແພງເຊື້ອຂອງພັກຣັດທີ່ປະຕິບັດກົດໝາຍຢ່າງຈິງຈັງແລະຈິງໃຈ. ສາກົນ,ກຸມພາຄີຮ່ວມ 15 ປະເທດ,ສຫພຢຸຣົບແລະປະເທດ

*ເພື້ອນມິດກໍຈະໄວ້ເນື້ອເຊື່ອໃຈແລະໃຫ້ການຊ່ວຍເຫລືອພັກຣັດເພື່ອພັທນາທາງດ້ານການເມືອງເສຖກິດສັງຄົມແລະວັທນະທັມຫລາຍຂື້ນ.*

*ພວກເຮົາປະຊາຊົນພັກເສຣີປະຊາທິປະໄຕລາວ,ຂໍສເນີມາຍັງພັກຣັດ ສປປລາວຈົ່ງໄດ້ປະຕິບັດກົດໝາຍດ້ານສິດທິມະນຸດຂອງສຫຊ,ແກ້ໄຂຣະບົບປະຕິບັດງານແບບ,ຕັ້ງຂໍ້ສົງໃສ,ກ່າວໂທດ,ຈັບກຸມແລະລົງໂທດປະຊາຊົນນີ້ໃຫ້ສຳເຣັດລົງພາຍໃນ 90 ວັນ,ນັບແຕ່ອອກຖແລງການສບັບນີ້ເປັນຕົ້ນໄປ,ຄືແຕ່ວັນທີ22 ມົກກະຣາ 2018 ເຖີງວັນທີ21 ເມສາ 2018.ຫລັງຈາກນັ້ນສາກົນກໍ່ຈະໄດ້ຕິດຕາມກວດກາເບິ່ງຄວາມກ້າວໜ້າ,ບໍ່ໃຫ້ເປັນອຸປະສັກທ່ວງດຶງການປະສານງານຮ່ວມ,ເພື່ອໃຫ້ບັນລຸເປົ້າໝາຍຕາມທີ່ໄດ້ກຳນົດໄວ້.*

*ຖ້າພັກຣັດຣັດມີບັນຫາໃນການປະຕິບັດງານ,ພວກເຮົາແລະຜູ້ຊ່ຽວຊານຈາກກຸມພາຄີຮ່ວມ,ພ້ອມທີ່ຈະໃຫ້ການສນັບສນຸນເຂົ້າມາຊ່ວຍກັນນຳດ້ວຍ.*

-ປະຊາຊົນມີໄຊ<br>
-ເສຣີປະຊາທິປະໄຕອົງອາດ<br>
-ຊາດລາວຈົ່ງຈເຣີນ<br>
-ຂໍຂອບໃຈ

ສູນກາງຕາງໜ້າ<br>
ພັກແລະກຳລັງທັບເສຣີປະຊາທິປະໄຕລາວ<br>
ຫ້ອງການປະທານພັກ<br>
ອາຈານ ສົມນຶກຟອງສູວັນ

ວັນທີ 22 ມົກກະຣາ 2018